**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

LFX ບໍລິສັດ ຕະຫຼາດແລກປ່ຽນ
ເງິນຕາຕ່າງປະເທດລາວ ຈຳກັດ

ເລກທີ...05...../ຕລຕ.2024

ນະຄອນຫຼວງວຽງຈັນ, ວັນທີ 29 ພະຈິກ 2024

# ແຈ້ງການ

ເຖິງ: ບັນດາ ທ່ານລູກຄ້າທີ່ນຳໃຊ້ບໍລິການຂອງ ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ **ຈຳກັດ (LFX).**

ເລື່ອງ: **ການເກັບຄ່າທຳນຽມ ດຳເນີນທຸລະກຳແລກປ່ຽນເງິນຕາຜ່ານຕະຫຼາດແລກປ່ຽນ LFX.**

- ອີງຕາມອີງຕາມຂໍ້ຕົກລົງວ່າດ້ວຍ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດ ສະບັບເລກທີ 1161/ທຫລ, ລົງວັນທີ 29 ຕຸລາ 2024;
- ອີງຕາມໃບທະບຽນວິສາຫະກິດຂອງ ບໍລິສັດ ຕະຫຼາດແລກປ່ຽນເງິນຕາງຕ່າງປະເທດລາວ ຈຳກັດ ສະບັບເລກທີ 4016/ຈທວ, ລົງວັນທີ 22 ຕຸລາ 2024;
- ອີງຕາມໜັງສືແຈ້ງຕອບ ຂອງກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 1329/ກນງ, ລົງວັນທີ 29 ພະຈິກ 2024.

ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ (ຕລຕ) ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ ຕລຕ ຈະເລີ່ມດຳເນີນການເກັບຄ່າທຳນຽມ ໃນການດຳເນີນທຸລະກຳແລກປ່ຽນເງິນຕາ ຜ່ານຕະຫຼາດແລກປ່ຽນ LFX ທີ່ເປັນລາຍການ ຈັບຄູ່ແລກປ່ຽນສຳເລັດ ໃນອັດຕາຄ່າທຳນຽມ **0.25%** ຂອງວົງເງິນທີ່ສະເໜີຂໍແລກປ່ຽນ ນັບແຕ່ວັນທີ **03 ທັນວາ 2024** ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຂໍຂອບໃຈລູກຄ້າທຸກທ່ານ ທີ່ເລືອກໃຊ້ບໍລິການແລກປ່ຽນເງິນຕາຕ່າງປະເທດ ຜ່ານລະບົບຕະຫຼາດແລກປ່ຽນເງິນຕາຕ່າງປະເທດ ຂອງ ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ.

**ໝາຍເຫດ:** ສຳລັບທຸລະກຳທີ່ລູກຄ້າສະເໜີຂໍແລກປ່ຽນ, ແຕ່ບໍ່ສາມາດຈັບຄູ່ລາຍການສຳເລັດ ແມ່ນຈະບໍ່ຖືກເກັບຄ່າທຳນຽມ ແລະ ລູກຄ້າສາມາດຖອນເງິນຄືນໄດ້ເຕັມຈຳນວນ.

ຜູ້ອຳນວຍການ
ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ

ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ
Lao Foreign Exchange Co., Ltd

**ສີສະຫວາດ ດວງສະຫວັນ**